### ມາດຕາ 14. ຜົນສັກສິດຂອງການໄກ່ເກ່ຍ

ບົດບັນທຶກໄກ່ເກ່ຍຂໍ້ຂັດແຍ່ງທີ່ຄູ່ກໍລະນີຍິນຍອມຕົກລົງກັນໄດ້ດ້ວຍການປະນີປະນອມ ແມ່ນມີຜົນສັກສິດໃນການປະຕິບັດທັນທີໂລດ.

ບົດບັນທຶກໄກ່ເກ່ຍຂໍ້ຂັດແຍ່ງທີ່ບໍ່ສາມາດຕົກລົງກັນໄດ້ຈະມີຄຸນຄ່າເປັນເອກະສານຂໍ້ມູນອ້າງອີງໃຫ້ຄະນະພັກຮາກຖານກຸ່ມບ້ານ ແລະຫ້ອງການຍຸຕິທຳເມືອງພິຈາລະນາ ຫຼືເປັນຂໍ້ມູນໃຫ້ແກ່ການດຳເນີນຄະດີຂອງອົງການທີ່ກ່ຽວຂ້ອງໃນກໍລະນີທາກຖືກຖືກດຳເນີນຄະດີຕາມຂະບວນການຍຸຕິທຳ.

### ມາດຕາ 15. ຂໍ້ຫ້າມ

ຂໍ້ຫ້າມສຳລັບໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ມີດັ່ງນີ້ :

- ບໍ່ໃຫ້ນຳເອົາຄະດີອາຍາທີ່ຮ້າຍແຮງມາໄກ່ເກ່ຍ (ຍົກເວັ້ນການກະທຳຜິດທີ່ກຳນົດໄວ້ໃນມາດຕາ 25 ຂອງກົດໝາຍອາຍາ);
- ບໍ່ໃຫ້ໄກ່ເກ່ຍຂໍ້ຂັດແຍ່ງທີ່ຂັດຜົນປະໂຫຍດຂອງລັດ, ລວມໝູ່;
- ບໍ່ໃຫ້ປັບໃໝ ຫຼືລົງໂທດທາງອາຍາ.;
- ບໍ່ໃຫ້ເອົາຄະດີທີ່ສານປະຊາຊົນ ຫຼືຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໄດ້ຕັດສິນແລ້ວມາໄກ່ເກ່ຍອີກ.

### ມາດຕາ 16. ການຖອນຕົວຂອງຄະນະໜ່ວຍໄກ່ເກ່ຍ

ຄະນະໜ່ວຍໄກ່ເກ່ຍ ສາມາດຖອນຕົວອອກຈາກການໄກ່ເກ່ຍຂໍ້ຂັດແຍ່ງໄດ້ໃນກໍລະນີດັ່ງນີ້ :

- ພົວພັນເຖິງບັນຫາສຸຂະພາບຂອງຕົນ;
- ຂໍ້ຂັດແຍ່ງແມ່ນພົວພັນໂດຍກົງກັບຜົນປະໂຫຍດຂອງຕົນ ແລະຄອບຄົວ;
- ເປັນພີ່ນ້ອງຂອງຄູ່ກໍລະນີຝ່າຍໃດຝ່າຍໜຶ່ງທີ່ຂັດແຍ່ງກັນ;
- ຄູ່ກໍລະນີທັງສອງຝ່າຍມີເຫດຜົນທີ່ໜັກແໜ້ນບໍ່ເຫັນດີໃຫ້ເຂົ້າປະກອບເປັນຄະນະໄກ່ເກ່ຍຂໍ້ຂັດແຍ່ງດັ່ງກ່າວ;
- ກໍລະນີອື່ນໆທີ່ເຫັນວ່າມີຄວາມຈຳເປັນ.

## ໝວດທີ VI
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

### ມາດຕາ 17. ນະໂຍບາຍ

ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ທີ່ມີຜົນງານດີເດັ່ນໃນການປະຕິບັດໜ້າທີ່ວຽກງານຈະໄດ້ຮັບການຍ້ອງຍໍ, ຊົມເຊີຍ ຫຼືໄດ້ຮັບນະໂຍບາຍອື່ນໆ ຕາມຄວາມເໝາະສົມ.

ຄະນະໄກ່ເກ່ຍຜູ້ໃດ ຫາກໄດ້ເປັນແບບຢ່າງທີ່ດີແກ່ໝູ່ຄະນະໃນການປະຕິບັດສິດ ແລະໜ້າທີ່ຂອງຕົນ ຈະໄດ້ຮັບການຍ້ອງຍໍ, ຊົມເຊີຍ ຫຼືໄດ້ຮັບນະໂຍບາຍອື່ນໆ ຕາມຄວາມເໝາະສົມ.